ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ..207.../ນຍ.

# ດຳລັດ
# ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ

- ອີງຕາມກົດໝາຍວ່າດ້ວຍລັດຖະບານເລກທີ 01/ 95, ລົງວັນທີ 8 ມິນາ 1995;
- ອີງຕາມກົດໝາຍວ່າດ້ວຍທຸລະກິດ ເລກທີ 03/94/ສພຊ, ລົງວັນທີ 18 ກໍລະກົດ1994;
- ອີງຕາມດຳລັດວ່າດ້ວຍທຸລະກິດຈຳໜ່າຍສິນຄ້າພາຍໃນເລກທີ........./ນຍ ລົງວັນທີ...;
- ອີງຕາມ ການສະເໜີຂອງ ລັດຖະມົນຕີວ່າ ການກະຊວງການຄ້າ ສະບັບ ເລກທີ 1165/ ກຄ.ຫກ ລົງວັນທີ 09 ຕຸລາ 2001;
- ອີງຕາມມະຕິຕົກລົງຂອງກອງປະຊຸມລັດຖະບານ ປະຈຳເດືອນ ພະຈິກ ປີ 2000.

## ນາຍົກລັດຖະມົນຕີ ອອກດຳລັດ :

## ໝວດທີ I
## ບົດບັນຍັດທົ່ວໄປ

ມາດຕາ 1. ໜ້າທີ່ຂອງດຳລັດ

ດຳລັດສະບັບນີ້ວາງອອກເພື່ອກຳນົດລະບຽບການຄຸ້ມຄອງລາຄາສິນຄ້າຍຸດທະສາດແລະສິນຄ້າທີ່ມີຜົນກະທົບໂດຍກົງຕໍ່ການຜະລິດ, ຊີວິດການເປັນຢູ່ຂອງປະຊາຊົນ ແນໃສ່ສົ່ງເສີມຜູ້ດຳເນີນທຸລະກິດ ການຜະລິດ, ການຄ້າ, ປົກປ້ອງຜູ້ຊົມໃຊ້ ແລະ ເຮັດໃຫ້ລາຄາສິນຄ້າມີຄວາມຍຸຕິທຳ.

ມາດຕາ 2. ການຄຸ້ມຄອງລາຄາສິນຄ້າ

ລາຄາສິນຄ້າຢູ່ ສປປລາວ ຖືກກຳນົດດ້ວຍກົນໄກຕະຫລາດທີ່ມີການຄຸ້ມຄອງຂອງລັດ. ການຄຸ້ມຄອງລາຄາສິນຄ້າແມ່ນການຕິດຕາມຊອກຮູ້ສະພາບ ການປາກົດຕົວຈິງ ສາເຫດການເໜັງຕີງຂອງລະດັບລາຄາສິນຄ້າ ແລະ ການວາງມາດຕະການຮັກສາລະດັບລາຄາສິນຄ້າໃຫ້ສົມເຫດສົມຜົນ.

ມາດຕະການຄຸ້ມຄອງລາຄາສິນຄ້າປະກອບດ້ວຍ ມາດຕະການສຶກສາອົບຮົມ, ເສດຖະກິດ, ບໍລິ

**ມາດຕາ 3. ສິນຄ້າທີ່ລັດຄຸ້ມຄອງລາຄາ**

ປະເພດສິນຄ້າທີ່ລັດຄຸ້ມຄອງລາຄາປະກອບດ້ວຍ:

- ສິນຄ້ານຳເຂົ້າຈາກຕ່າງປະເທດບາງຊະນິດ;
- ສິນຄ້າກະສິກຳ, ອຸດສາຫະກຳ ຜະລິດພາຍໃນບາງຊະນິດ;
- ສິນຄ້າຍຸດທະສາດສົ່ງອອກຈາກແຫ່ລ່ງຊັບພະຍາກອນທຳມະຊາດ.

## ໝວດທີ II
## ສິດ ແລະ ພັນທະຂອງຜູ້ດຳເນີນທຸລະກິດ

**ມາດຕາ 4. ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດ**

ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດ ໃນຂົງເຂດການຜະລິດ ແລະ ການຄ້າມີດັ່ງນີ້:

- ຖືບັນຊີຕາມລະບຽບກົດໝາຍ;
- ສະແດງ ຫລື ຕິດປ້າຍລາຄາສິນຄ້າ;
- ໃຫ້ການຮ່ວມມືແກ່ເຈົ້າໜ້າທີ່ກວດກາລາຄາສິນຄ້າ;
- ຮ້ອງທຸກ ຫລື ຮ້ອງຟ້ອງກ່ຽວກັບການປະຕິບັດງານ ຂອງເຈົ້າໜ້າທີ່ກວດກາລາຄາສິນຄ້າເມື່ອເຫັນວ່າມີການກະທຳບໍ່ຖືກຕ້ອງ.

## ໝວດທີ III
## ອົງການຄຸ້ມຄອງລາຄາສິນຄ້າ

**ມາດຕາ 5. ອົງການຄຸ້ມຄອງລາຄາສິນຄ້າ**

ອົງການຄຸ້ມຄອງລາຄາສິນຄ້າປະກອບດ້ວຍ: ລັດຖະບານ, ກະຊວງການຄ້າ, ບັນດາຂະແໜງການທີ່ກ່ຽວຂ້ອງ, ແຂວງ, ກຳແພງນະຄອນ ແລະເຂດພິເສດ.

ລັດຖະບານເປັນຜູ້ວາງນະໂຍບາຍການຄຸ້ມຄອງແລະຕົກລົງລາຄາສິນຄ້າຍຸດທະສາດ ໃນແຕ່ລະໄລຍະ ແລະ ອາດມອບສິດຕົກລົງດັດແກ້ລາຄາສິນຄ້າດັ່ງກ່າວໃຫ້ກະຊວງກ່ຽວຂ້ອງເປັນຜູ້ອະນຸມັດ.

**ມາດຕາ 6. ສິດ ແລະ ໜ້າທີ່ ຂອງກະຊວງການຄ້າ**

ສິດ ແລະ ໜ້າທີ່ ຂອງກະຊວງການຄ້າມີດັ່ງນີ້:

- ຮັບຜິດຊອບໂດຍກົງຕໍ່ລັດຖະບານໃນວຽກງານຄຸ້ມຄອງລາຄາສິນຄ້າອຸປະໂພກ, ບໍລິໂພກທົ່ວໄປ ແລະ ວັດຖຸດິບຮັບໃຊ້ການຜະລິດ;
- ກຳນົດມາດຕະການ, ລາຍການສິນຄ້າທີ່ລັດຄວບຄຸມລາຄາໃນແຕ່ລະໄລຍະ;
- ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອເຮັດໃຫ້ການສະໜອງສິນຄ້າຄວບຄຸມທີ່ຜະລິດພາຍໃນມີພຽງພໍກັບຄວາມຕ້ອງການຂອງປະຊາຊົນ;

- ຮັບແລະ ພິຈາລະນາຄຳຮ້ອງທຸກຂອງຜູ້ຊົມໃຊ້;

- ຊີ້ນຳ ແລະ ກວດກາການຄຸ້ມຄອງລາຄາສິນຄ້າຕໍ່ພະແນກການຄ້າແຂວງ, ກຳແພງນະຄອນ ແລະ ເຂດພິເສດ.

ໃຫ້ກະຊວງການຄ້າສ້າງຕັ້ງພາກສ່ວນຄຸ້ມຄອງລາຄາສະເພາະຂຶ້ນ ໃນໂຄງປະກອບການຈັດຕັ້ງຂອງກະຊວງ ແລະ ພະແນກການຄ້າແຂວງ, ກຳແພງນະຄອນ ແລະ ເຂດພິເສດ.

**ມາດຕາ 7. ການຄຸ້ມຄອງລາຄາສິນຄ້າຂອງບັນດາຂະແໜງການ**

ລາຄາສິນຄ້າທີ່ບັນດາຂະແໜງການຄຸ້ມຄອງແມ່ນປະເພດສິນຄ້າທີ່ຂຶ້ນກັບຄວາມຮັບຜິດຊອບໂດຍກົງທາງດ້ານວິຊາສະເພາະຂອງບັນດາຂະແໜງການດັ່ງກ່າວ.

ບັນດາຂະແໜງການມີສິດ ແລະ ໜ້າທີ່ຄຸ້ມຄອງຕົ້ນທຶນການຜະລິດ ແລະ ສະໜອງຂໍ້ມູນລາຄາຕົ້ນທຶນ ໃຫ້ຂະແໜງການຄ້າເພື່ອກຳນົດລາຄາສິນຄ້າໃຫ້ສົມເຫດສົມຜົນ.

**ມາດຕາ 8. ສິດ ແລະ ໜ້າທີ່ຂອງແຂວງ, ກຳແພງນະຄອນ ແລະ ເຂດພິເສດ**

ແຂວງ, ກຳແພງນະຄອນ ແລະ ເຂດພິເສດມີສິດ ແລະ ໜ້າທີ່ດັ່ງນີ້:

- ຮັບຜິດຊອບ ການຄຸ້ມຄອງລາຄາສິນຄ້າ ພາຍໃນຂອບເຂດທ້ອງຖິ່ນ ຂອງຕົນ ຕາມລະບຽບການ ແລະ ລາຍການສິນຄ້າທີ່ກະຊວງການຄ້າແບ່ງຂັ້ນຄຸ້ມຄອງໃຫ້ໃນແຕ່ລະໄລຍະ;

- ນຳໃຊ້ທຸກເຄື່ອງມືຂອງອົງການມະຫາພາກໃນລະດັບທ້ອງຖິ່ນຂອງຕົນ ເພື່ອຊ່ວຍພະແນກການຄ້າໃນວຽກງານຄຸ້ມຄອງລາຄາສິນຄ້າ ແລະ ກວດກາບັນດາຫົວໜ່ວຍທຸລະກິດ;

- ຊີ້ນຳ, ແບ່ງຄວາມຮັບຜິດຊອບ ແລະ ກວດກາການປະຕິບັດການຄຸ້ມຄອງລາຄາຢູ່ຂັ້ນເມືອງ.

## ໝວດທີ IV
## ມາດຕະການຕໍ່ຜູ້ກະທຳຜິດ

**ມາດຕາ 9. ການລະເມີດລະບຽບກ່ຽວກັບສິນຄ້າຄວບຄຸມລາຄາ**

ບຸກຄົນ ຫລື ນິຕິບຸກຄົນທີ່ໄດ້ລະເມີດລະບຽບກ່ຽວກັບສິນຄ້າຄວບຄຸມລາຄາ, ສວຍໂອກາດຂຶ້ນລາຄາ, ກັກຕຸນ, ປັ່ນປ່ວນ ຫລື ປອມແປງສິນຄ້າຈະບໍ່ມີສິດດຳເນີນທຸລະ ກິດ ສິນຄ້າດັ່ງກ່າວ ຫລື ຖືກຖອນທະບຽນວິສາຫະກິດ, ຖືກປັບໃໝ, ຖືກດຳເນີນຄະດີຕາມກົດໝາຍ.

**ມາດຕາ 10. ການລະເມີດອື່ນໆ**

ທຸກການລະເມີດຂອງຜູ້ດຳເນີນທຸລະກິດ, ຂອງເຈົ້າໜ້າທີ່, ພະນັກງານລັດທີ່ກ່ຽວຂ້ອງເຊັ່ນ: ການປອມແປງເອກະສານ, ການສວຍໃຊ້ໜ້າທີ່ຕຳແໜ່ງ ລ້ວນແຕ່ຕ້ອງຮັບຜິດຊອບຕໍ່ໜ້າກົດໝາຍ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 11. ການຈັດຕັ້ງປະຕິບັດ**

ມອບໃຫ້ລັດຖະມົນຕີວ່າການກະຊວງການຄ້າເປັນຜູ້ອອກຄຳແນະນຳ ເພື່ອຈັດຕັ້ງປະຕິບັດດຳລັດສະບັບນີ້. ບັນດາກະຊວງ, ອົງການທຽບເທົ່າ ແລະ ອຳນາດການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງມີໜ້າທີ່ຮ່ວມມື ແລະ ປະສານສົມທົບໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ຕາມພາລະບົດບາດຂອງຕົນຢ່າງເຂັ້ມງວດ.

**ມາດຕາ 12. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ. ທຸກຂໍ້ກຳນົດ, ລະບຽບການ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ນະຄອນວຽງຈັນ, ວັນທີ 11-10-2001

**ນາຍົກລັດຖະມົນຕີ,**

**ບຸນຍັງ ວໍລະຈິດ**